ເປັນຫຍັງຂ້ອຍຈຶ່ງເວົ້າວ່າ 9-1-1 ໃນເວລາທີ່ກຳລັງໂທຣເບີ 9-1-1?

ເມື່ອທ່ານໂທຣ 9-1-1 ໃນມັລໂນມາ ຄາວຕີ້, ທ່ານຈະຖືກແຈ້ງໃຫ້ກົດຕົວເລກ ຫຼື ເວົ້າຄຳວ່າ "911" ຫຼັງຈາກໄດ້ຍິນສຽງບັນທຶກສັ້ນໆ. ຖ້າວ່າບໍ່ມີສຽງຕອບຮັບ ຫຼື ບໍ່ມີການເລືອກຫຼັງຈາກເກົ້າວິນາທີ, ການໂທຣຈະຖືກຍຸດຕິ.

ເປັນຫຍັງຈຶ່ງຕ້ອງໂອນສາຍເຂົ້າລະບົບສຽບບັນທຶກ,
ເປັນຫຍັງຈຶ່ງບໍ່ຕໍ່ສາຍໂທຣຂອງຜູ້ໂທຣຈາກໂທຣະສັບມືຖືໃຫ້ຜ່ານຕະຫຼອດ?

ການໂທຣຫາ 9-1-1 ຈາກໂທຣະສັບມືຖືນັ້ນແມ່ນອິທີທີ່ນິຍົມຫຼາຍກວ່າ. ການໃຊ້ໂທຣະສັບເຮືອນແມ່ນກຳລັງລົດລົງ. ແຕ່ປະເດັນການໂທຣເຂົ້າ 9-1-1 ຈາກຖົງກໍຍັງຄົງເປັນບັນຫາຍູ່ເນື່ອງຈາກໂທຣະສັບມືຖືທີ່ເອົາໃສ່ໄວ້ໃນຖົງໂສ້ງເສື້ອ ຫຼືກະເປົານັ້ນໂທຣເຂົ້າເບີ 9-1-1 ໂດຍບໍ່ໄດ້ຕັ້ງໃຈ, ສະນັ້ນ ຈຶ່ງເຮັດໃຫ້ເກີດຄວາມຈຳເປັນສຳລັບເຈົ້າໜ້າທີ່ຜູ້ຮັບສາຍ 9-1-1 ທີ່ຈະຕ້ອງກວດສອບວ່າ ມັນແມ່ນການໂທຣສຸກເສີນແທ້ຈິງບໍ່. ໃນຂະນະທີ່ມີການໃຫ້ຄວາມຮູ້ກ່ຽວກັບບັນຫາການໂທຣຈາກຖົງເຂົ້າເບີ 9-1-1 ໂດຍບັງເອີນມາລະຍະໜຶ່ງແລ້ວ, ບັນຫານີ້ກໍຍັງເກີດຂຶ້ນຍູ່ເລື້ອຍໆ.

ຫາກທ່ານຕ້ອງການໂທຣ 9-1-1 ໃນມັລໂນມາ ຄາວຕີ້, ຂໍໃຫ້ກົດຕົວເລກ ຫຼື ເວົ້າວ່າ 9-1-1, ທ່ານກໍຈະໄດ້ຮັບການຕໍ່ສາຍຫາເຈົ້າໜ້າທີ່ຜູ້ຮັບສາຍໂທຣ. ໃນຂັ້ນຕອນນີ້, ຈົ່ງບອກສະຖານທີ່ຂອງທ່ານ ແລະບອກໃຫ້ເຈົ້າໜ້າທີ່ຮູ້ວ່າທ່ານມີເຫດສຸກເສີນ. ຂໍຈື່ໄວ້ວ່າບໍ່ແມ່ນວ່າຜູ້ໂທຣ 9-1-1 ຈາກໂທຣະສັບມືຖືທຸກຄົນຈະຕ້ອງໃຫ້ຂໍ້ມູນສະຖານທີ່ຂອງຜູ້ໂທຣ. ເພື່ອຮັບຄວາມຊ່ວຍເຫຼືອຢ່າງໄວວາ, ຂໍໃຫ້ພ້ອມທີ່ຈະຕອບຄຳຖາມຕໍ່ໄປນີ້:

- ເຫດສຸກເສີນເກີດຢູ່ໃສ? (ບອກທີ່ຢູ່, ຈຸດສັງເກດ, ຊື່ຖະໜົນ, ອື່ນໆ)
- ເກີດຫຍັງຂຶ້ນ?
- ທ່ານກຳລັງໂທຣຈາກເບີໂທຣຫຍັງ? ຈົ່ງບອກລະຫັດພື້ນທີ່ ແລະເບີໂທຣະສັບມືຖືຂອງທ່ານສະເໝີ.
- ມີຫຍັງເກີດຂຶ້ນແທ້? ອະທິບາຍຢ່າງຊັດເຈນວ່າມີຫຍັງເກີດຂຶ້ນ.
- ຖ້າວ່າລາຍງານອາຊະຍາກັມ, ການບອກລາຍລະອຽດຂອງຜູ້ຕ້ອງສົງໃສ ແລະຍານພາຫະນະ ແມ່ນສິ່ງສຳຄັນ ພ້ອມກັບທິດທາງທີ່ຜູ້ຕ້ອງສົງໃສມຸ່ງໜ້າໄປ.

***ຖ້າວ່າກຳລັງໃຊ້ໂທຣະສັບໂດຍບໍ່ມີສັນຍາການບໍລິການໂທຣະສັບ ແລະໂທຣະສັບຖືກຕັດ, ທ່ານຕ້ອງໂທຣ 9-1-1 ຊ້ຳອີກຄັ້ງ!***


ເປັນຫຍັງຂ້ອຍຈຶ່ງເວົ້າວ່າ 9-1-1 ໃນເວລາທີ່ກຳລັງໂທຣເບີ 9-1-1?

ເມື່ອທ່ານໂທຣ 9-1-1 ໃນມັລໂນມາ ຄາວຕີ້, ທ່ານຈະຖືກແຈ້ງໃຫ້ກົດຕົວເລກ ຫຼື ເວົ້າຄຳວ່າ "911" ຫຼັງຈາກໄດ້ຍິນສຽງບັນທຶກສັ້ນໆ. ຖ້າວ່າບໍ່ມີສຽງຕອບຮັບ ຫຼື ບໍ່ມີການເລືອກຫຼັງຈາກເກົ້າວິນາທີ, ການໂທຣຈະຖືກຍຸດຕິ.

ເປັນຫຍັງຈຶ່ງຕ້ອງໂອນສາຍເຂົ້າລະບົບສຽບບັນທຶກ,
ເປັນຫຍັງຈຶ່ງບໍ່ຕໍ່ສາຍໂທຣຂອງຜູ້ໂທຣຈາກໂທຣະສັບມືຖືໃຫ້ຜ່ານຕະຫຼອດ?

ການໂທຣຫາ 9-1-1 ຈາກໂທຣະສັບມືຖືນັ້ນແມ່ນອິທີທີ່ນິຍົມຫຼາຍກວ່າ. ການໃຊ້ໂທຣະສັບເຮືອນແມ່ນກຳລັງລົດລົງ. ແຕ່ປະເດັນການໂທຣເຂົ້າ 9-1-1 ຈາກຖົງກໍຍັງຄົງເປັນບັນຫາຍູ່ເນື່ອງຈາກໂທຣະສັບມືຖືທີ່ເອົາໃສ່ໄວ້ໃນຖົງໂສ້ງເສື້ອ ຫຼືກະເປົານັ້ນໂທຣເຂົ້າເບີ 9-1-1 ໂດຍບໍ່ໄດ້ຕັ້ງໃຈ, ສະນັ້ນ ຈຶ່ງເຮັດໃຫ້ເກີດຄວາມຈຳເປັນສຳລັບເຈົ້າໜ້າທີ່ຜູ້ຮັບສາຍ 9-1-1 ທີ່ຈະຕ້ອງກວດສອບວ່າ ມັນແມ່ນການໂທຣສຸກເສີນແທ້ຈິງບໍ່. ໃນຂະນະທີ່ມີການໃຫ້ຄວາມຮູ້ກ່ຽວກັບບັນຫາການໂທຣຈາກຖົງເຂົ້າເບີ 9-1-1 ໂດຍບັງເອີນມາລະຍະໜຶ່ງແລ້ວ, ບັນຫານີ້ກໍຍັງເກີດຂຶ້ນຍູ່ເລື້ອຍໆ.

ຫາກທ່ານຕ້ອງການໂທຣ 9-1-1 ໃນມັລໂນມາ ຄາວຕີ້, ຂໍໃຫ້ກົດຕົວເລກ ຫຼື ເວົ້າວ່າ 9-1-1, ທ່ານກໍຈະໄດ້ຮັບການຕໍ່ສາຍຫາເຈົ້າໜ້າທີ່ຜູ້ຮັບສາຍໂທຣ. ໃນຂັ້ນຕອນນີ້, ຈົ່ງບອກສະຖານທີ່ຂອງທ່ານ ແລະບອກໃຫ້ເຈົ້າໜ້າທີ່ຮູ້ວ່າທ່ານມີເຫດສຸກເສີນ. ຂໍຈື່ໄວ້ວ່າບໍ່ແມ່ນວ່າຜູ້ໂທຣ 9-1-1 ຈາກໂທຣະສັບມືຖືທຸກຄົນຈະຕ້ອງໃຫ້ຂໍ້ມູນສະຖານທີ່ຂອງຜູ້ໂທຣ. ເພື່ອຮັບຄວາມຊ່ວຍເຫຼືອຢ່າງໄວວາ, ຂໍໃຫ້ພ້ອມທີ່ຈະຕອບຄຳຖາມຕໍ່ໄປນີ້:

- ເຫດສຸກເສີນເກີດຢູ່ໃສ? (ບອກທີ່ຢູ່, ຈຸດສັງເກດ, ຊື່ຖະໜົນ, ອື່ນໆ)
- ເກີດຫຍັງຂຶ້ນ?
- ທ່ານກຳລັງໂທຣຈາກເບີໂທຣຫຍັງ? ຈົ່ງບອກລະຫັດພື້ນທີ່ ແລະເບີໂທຣະສັບມືຖືຂອງທ່ານສະເໝີ.
- ມີຫຍັງເກີດຂຶ້ນແທ້? ອະທິບາຍຢ່າງຊັດເຈນວ່າມີຫຍັງເກີດຂຶ້ນ.
- ຖ້າວ່າລາຍງານອາຊະຍາກັມ, ການບອກລາຍລະອຽດຂອງຜູ້ຕ້ອງສົງໃສ ແລະຍານພາຫະນະ ແມ່ນສິ່ງສຳຄັນ ພ້ອມກັບທິດທາງທີ່ຜູ້ຕ້ອງສົງໃສມຸ່ງໜ້າໄປ.

***ຖ້າວ່າກຳລັງໃຊ້ໂທຣະສັບໂດຍບໍ່ມີສັນຍາການບໍລິການໂທຣະສັບ ແລະໂທຣະສັບຖືກຕັດ, ທ່ານຕ້ອງໂທຣ 9-1-1 ຊ້ຳອີກຄັ້ງ!***